# ຂັ້ນຕອນປະກອບເອກະສານແຈ້ງປ້າຍຕິກເຣ່ຍ, ປ້າຍເປ່ເພ, ປ້າຍຄືນລົກ ແລະ ທົດແທນ ທົ່ວປະເທດ

## ❖ການປະກອບເອກະສານ ປ້າຍປະເພດລົງຈັກ.

1. ໃບຢັ້ງຢືນທີ່ຢູ່.
2. ໃບແຈ້ງເສຍຫາຍ.
3. ຈາກອຳນາດການປົກຄອງບ້ານ ( ອອກຊື່ຕາມທະບຽນ ).
4. ທະບຽນລົດກອບປື້ ຍທຂ ແຂວງອອກໃຫ້ ( ຍັງບໍ່ໝົດກຳນົດ ).
5. ໃຫ້ເອົາລົດເຂົ້າໄປກວດກາຕົວຈິງ ເພື່ອລີດເລກຈັກ, ເລກຖັງ ຕິດໃສ່ກັບບຶດບັນທຶກກວດກາລົດ.

## ▪ ການປະກອບເອກະສານຮັບແຈ້ງ ປະເພດລົດ ລັດບໍລິຫານ.

1. ໃບສະເໜີແຈ້ງເສຍຫາຍປ້າຍລົດ ອອກຊື່ຕາມທະບຽນ.
2. ໃບຢັ້ງຢືນການຄຸ້ມຄອງລົດ ການຈົດທະບຽນຂຶ້ນເປັນຊັບສິນຂອງລັດ ຈາກພະແນກຊັບສິນແຂວງ.
3. ກອບປື້ທະບຽນທີ່ ຍທຂ ແຂວງອອກໃຫ້ ( ຍັງບໍ່ໝົດກຳນົດ ).
4. ໃຫ້ເອົາລົດເຂົ້າໄປກວດກາຕົວຈິງ ເພື່ອລີດເລກຈັກ, ເລກຖັງ ຕິດໃສ່ບຶດບັນທຶກກວດກາລົດ.

- **ການປະກອບເອກະສານ ປ້າຍລົດ ອົງການຈັດຕັ້ງສາກົນ.**

1. ໃບສະເໜີຈາກອົງການຈັດຕັ້ງສາກົນ ອອກຊື່ຕາມທະບຽນ.
2. ໃບຢັ້ງຢືນລົດ ຈາກກົມພິທີການທູດ ກະຊວງການ ກ
3. ຈາກອຳນາດການປົກຄອງບ້ານ ( ອອກຊື່ຕາມທະບຽນ ).
4. ທະບຽນລົດກ່ອນປີ້ ຍທຂ ແຂວງອອກໃຫ້ ( ຍັງບໍ່ໝົດກຳນົດ ).
5. ໃຫ້ເອົາລົດເຂົ້າໄປກວດກາຕົວຈິງ ເພື່ອລີດເລກຈັກ, ເລກຖັງ ຕິດໃສ່ກັບປຶ້ມບັນທຶກກວດກາລົດ.

- **ການປະກອບເອກະສານປະເພດປ້າຍລົດ ທຸລະກິດ 1 % ແລະ ທຸລະກິດ 100 %.**

1. ໃບຢັ້ງຢືນທີ່ຢູ່ ແລະ ໃບແຈ້ງເສຍຫາຍຈາກອຳນາດການປົກຄອງບ້ານ.
2. ຖ້າເປັນລົດບໍລິສັດ ແມ່ນມີໃບສະເໜີແຈ້ງເສຍຫາຍຈາກບໍລິສັດ.
3. ທະບຽນກອບປີ້ທີ່ ຍທຂ ແຂວງອອກໃຫ້ ( ຍັງບໍ່ໝົດກຳນົດ )
4. ໃບອະນຸຍາດດຳເນີນທຸລະກິດ.
5. ໃບເສຍປະຕັງອາກອນປະຈຳປີ.
6. ລົດຜ່ອນ ລົດດາວ ມີໃບຢັ້ງຢືນມອບກຳມະສິດນຳໃຊ້ລົດ ຈາກບໍລິສັດໃຫ້ຜູ່ຜ່ອນ.
7. ໃຫ້ເອົາລົດເຂົ້າໄປກວດກາຕົວຈິງ ເພື່ອລີດເລກຈັກ, ເລກຖັງ, ຕິດໃສ່ກັບປຶ້ມບັນທຶກກວດກາລົດ.

- **ການປະກອບເອກະສານ ປະເພດລົດ ຊື້ວດາວ.**

1. ໃບແຈ້ງເສຍຫາຍຈາກອຳນາດປົກຄອງບ້ານ.
2. ໃບສະເໜີແຈ້ງເສຍຫາຍຈາກບໍລິສັດ ( ໂຄງການກໍ່ສ້າງ ).
3. ທະບຽນລົດກອບປີ້ ທີ່ ຍທຂ ແຂວງອອກໃຫ້ ( ຍັງບໍ່ໝົດກຳນົດ ).
4. ໃຫ້ເອົາລົດເຂົ້າໄປກວດກາຕົວຈິງ ເພື່ອລີດເລກຈັກ, ເລກຖັງ ຕິດໃສ່ກັບປຶ້ມບັນທຶກກວດກາລົດ.

- **ການປະກອບເອກະສານ ປ້າຍທົດແທນ.**

1. ເອກະສານແມ່ນໄປພິວພັນນຳ ຍທຂ ແຂວງ.
2. ທະບຽນກອບປີ້ທີ 01, ທະບຽນທີ 02 ແລະ ທະບຽນທີ 03.
3. ໃບຢັ້ງຢືນທີ່ຢູ່ຂອງເຈົ້າຂອງລົດຜູ່ທີ 01, 02 ກອບປີ້, ຜູ່ທີ 03 ແມ່ນໂຕແທ້ຈ້ຳກາແດງ.
4. ໃບສີບົວ 01, 02, 03.
5. ໃຫ້ເອົາລົດເຂົ້າໄປກວດກາຕົວຈິງ ເພື່ອລັດເລກຈັກ, ເລກຖັງ, ຕິດໃສ່ກັບບົດບັນທຶກກວດກາລົດ.

➢ ປ້າຍທົດແທນແມ່ນການປ່ຽນຈາກປ້າຍທີ 01 ເປັນປ້າຍທີ 02 ແລ້ວກັບຄືນມາເປັນປ້າຍທີ 01 ຄືເກົ່າ. ຍົກຕົວຢ່າງ ກກ 0001 ທຸກກິດ 100% ປ່ຽນເປັນປ້າຍ ກກ 1234 ເອກະຊົນລາວ ພາຍຫຼັງກັບຄືນຈະເປັນປ້າຍ ທຸລະກິດ 100 % ຈະ ຊ້ຳຄືນເລກທະບຽນເກົ່າ ກກ 0001 ທຸລະກິດ 100%.

**ໝາຍເຫດ:**

ຖ້າເຈົ້າຂອງລົດໃຫ້ຄົນອື່ນໄປແຈ້ງແທນ ແມ່ນໃຫ້ເອົາໃບຢັ້ງຢືນທີ່ຢູ່ໄປແຈ້ງ ຫຼື ກອບປີ້ບັດປະຈຳຕົວ, ສຳມະໂນຄົວ ຕິດຂັດໃສ່ນຳເອກະສານທີ່ໄດ້ກ່າວມາຂ້າງເທິງນັ້ນ.

ທະບຽນທີ່ບໍ່ມີກຳນົດ, ທະບຽນທີ່ໝົດກຳນົດແລ້ວ ຫຼື ທະບຽນຊົ່ວຄາວ ( ທະບຽນເຈ້ຍ ) ແມ່ນແນະນຳໃຫ້ເຈົ້າຂອງລົດ ໄປ ປ່ຽນທະບຽນຢູ່ນຳພະແນກ ຍທຂ ແຂວງສາກ່ອນ.

ລົດຖືກຄົນຮ້າຍລັກໄປ, ໄດ້ກັບຄືນມາ ແຕ່ປ້າຍເສຍຫາຍ ຕ້ອງມີບົດບັນທຶກມອບຮັບລົດຈາກພາກສ່ວນທີ່ກ່ຽວຂ້ອງນັ້ນ.